## ແຜນການສອນ

## ບົດຮຽນໂຮງຮຽນວັນອາທິດ

## ວັນອາທິດ ທີ 8-ສິງຫາ- 2010 (08-08-2010)

## ປັກຕາໃສ່ຈຸດປະສົງຂອງພຣະເຈົ້າ:

**ຂໍ້ພຣະຄັມພີໃນບົດຮຽນ:** (2 ຊາມູເອນ 7:1-7, 11ຂ-16, 18-21)

**ບົດຮຽນນີ້ເວົ້າກ່ຽວກັບຫຍັງ?:** ບົດຮຽນນີ້ ເວົ້າເຖິງການເລືອກທາງເພື່ອນໃຫ້ຊີວິດຂອງເຮົາໄປຕາມພຣະປະສົງຂອງພຣະເຈົ້າ.

**ເປັນຫຍັງບົດຮຽນນີ້ຈຶ່ງມີຄວາມສຳຄັນ?:**

ພວກຜູ້ອາວຸໂສຂອງພວກເຮົາໃນສມັຍນີ້ ພາກັນຊອກຫາທິດທາງ ແລະຈຸດປະສົງຂອງພຣະເຈົ້າໃນຊີວິດ. ພວກເຮົາພາກັນຫຍຸ້ງກັບ ພາຣະໜ້າທີ່ ກັບວຽກງານການບ້ານແລະກຸ່ມສັງຄົມ ພວກເຮົາເລີຍບໍ່ຄ່ອຍມີເວລາ ປັກຕາໃສ່ສິ່ງທີ່ພຣະເຈົ້າຕ້ອງການໃຫ້ພວກເຮົາເຮັດ. ພວກເຮົາອາດເປັນຄົນສຳເຣັດດີໃນສາຍຕາຂອງງໂລກ, ແຕ່ເຫັນວ່າທາງໃນຊີວິດແລ້ວສັບສົນຫວຸ້ນວາຍ ເໝືອນຄຳທີ່ບູຮານໄດ້ເວົ້າໄວ້ວ່າ "ກ້ຽງແຕ່ນອກທາງໃນເປັນໝາກເດື່ອ".

**ບົດຮຽນນີ້ສາມາດມີຜົນສະທ້ອນຕໍ່ຊີວິດຂອງທ່ານຢ່າງໃດ?:**

ບົດຮຽນນີ້ ຈະຊ່ອຍໜູນໃຈທ່ານໃຫ້ຊີວິດຂອງທ່ານປັກຕາໃສ່ຈຸດປະສົງຂອງພຣະເຈົ້າ, ບໍ່ແມ່ນປັກຕາໃສ່ແຕ່ຄວາມສຸກທີ່ເຫັນແກ່ຕົວ.

**ການຈັດຕຽມ ແລະແຜນການສອນຂອງຄຣູ:**

1. ອະທິຖານຂໍການຊົງນຳຈາກພຣະວິນຍານບໍຣິສຸດ ກ່ອນສິ່ງອື່ນໝົດ.
2. ສຶກສາຂໍ້ພຣະຄັມພີທີ່ຈະໃຊ້ໃນບົດຮຽນນີ້.
3. ຖາມລື້ມຄວາມຊົງຈຳຂອງນັກຮຽນໃນບົດຮຽນອາທິດແລ້ວນີ້.
4. ອ່ານ ແຜນການສອນ ໝາຍບ່ອນສຳຄັນ, ປັບປຸງ, ແກ້ໄຂ, ຈົດບັນທຶກ ແລະ ອື່ນໆ……..
5. ແຈກຢາຍບົດຮຽນໃຫ້ນັກຮຽນທຸກຄົນ

**ແນະນຳ:**

- ໃຫ້ອ່ານຫົວຂໍ້ບົດຮຽນພາຍໃນອາທິດນີ້, ແລ້ວຂໍໃຫ້ນັກຮຽນຂຽນລາຍການ ທີ່ພຣະເຈົ້າມີພຣະປະສົງຫລາຍໆຫລາຍຢ່າງສຳລັບຊີວິດຂອງບັນດາຜູ້ທີ່ເຊື່ອທຸກໆຄົນ. (ຄຳຕອບ ບາງຄົນໃຫ້ເປັນສາວົກ, ບາງຄົນໃຫ້ຮັບໃຊ້ຄົນອື່ນນຳ ແລະໃຫ້ໄດ້ຮັບຄວາມລອດພົ້ນດ້ວຍ.
- ມັນເປັນການຍາກຫລາຍບໍ່ ທີ່ຈະປັກຕາໃສ່ພຣະຄຳພຽງຂໍ້ໃດຂໍ້ນຶ່ງ ໃນເມື່ອມີຫລາຍຫົວຂໍ້ທີ່ສຳຄັນ?
- ໃຫ້ອະທິບາຍວ່າບົດຮຽນໃນມື້ນີ້ຈະຊ່ອຍໃຫ້ເຂົາເຈົ້າເຂົ້າໃຈເຖິງສິ່ງສຳຄັນຂອງການປັກໃຈໃສ່ວ່າພຣະເຈົ້າມາກ່ອນ ໃນເຈຕນາຮ້າຍຂອງຄວາມຈິງຊຶ່ງເຮັດໃຫ້ພວກເຮົາມີຄວາມຫຍຸ້ງຍາກແຕ່ລະວັນ.

1. **ຄວາມຕັ້ງໃຈອັນດີ:** (2 ຊາມູເອນ 7:1-7)

- ໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານພຣະທັມ 2 ຊາມູເອນ 7:1-7
- ທ່ານຄິດວ່າແນວໃດທີ່ດາວິດມີຄວາມສົນໃຈໃນການສ້າງພຣະວິຫານສຳລັບພຣະເຈົ້າ?
- ສ້າງຄວາມດຶງດູດໃຫ້ນັກຮຽນມີຄວາມສົນໃຈໃນການສົນທະນາວ່າເຮັດແນວໃດ ໃນເວລາພັກຜ່ອນຫລັງຈາກທັງວັນ ດ້ວຍການມີໜ້າທີ່ຮັບຜິດຊອບບາງຢ່າງ, ຫລາຍເທື່ອຄົນເຮົາອາດຢາກເຮັດວຽກບາງສິ່ງທີ່ງ່າຍໆ ກໍເປັນໄດ້.
- ຄວາມກົດດັນທີ່ດາວິດທຳໃຫ້ເຄື່ອນໄຫວເປັນຄວາມບໍຣິສຸດ.ຊຶ່ງຊີ້ໃຫ້ເຫັນນາທານຜູ້ປະກາດພຣະທັມຂອງພຣະເຈົ້າ ,ເປັນຕົ້ນແບບທີ່ໃຫ້ກຳລັງໃຈແກ່ດາວິດໃນການດຳເນີນສ້າງພຣະວິຫານ.
- ອີງຕາມທີ່ຜ່ານມາ, ດາວິດໄດ້ປັກໃຈໃສ່ພຣະປະສົງຂອງພຣະເຈົ້າ ຫລືລາວໄດ້ຕັດສິນໃຈວ່າຄວາມຄິດທີ່ດີໄປຕາມທາງແຜນການຂອງພຣະເຈົ້າ?
- ໃຫ້ແບ່ງປັນຕາມເວລາຊີວິດຂອງທ່ານທີ່ທ່ານໄດ້ເຮັດສິ່ງໃດສິ່ງນຶ່ງໃຫ້ດີທີ່ສຸດໃຫ້ແກ່ຄົນໃດຄົນນຶ່ງ, ແຕ່ວ່າແຜນການຂອງທ່ານບໍ່ໄດ້ເປັນໄປຕາມຄວາມປາຖນາ. (ຕົວຢ່າງ ທ່ານຕ້ອງການທຳຄວາມສະອາດເຮືອນໃຫ້ເພື່ອນບ້ານ ໃນເວລາທີ່ລາວຖືກຜ່າຕັດ, ແຕ່ວ່າລາວຍັງມີຍາດພີ່ນ້ອງມາຢ້ຽມຢາມແລະເວົ້າລົມນຳຢູ່.)
- ຖາມວ່າ ພວກເຮົາຈະຮູ້ໄດ້ຢ່າງໃດວ່າເປັນຄວາມຄິດທີ່ດີ ນັ້ນເບິ່ງເໝືອນວ່າເປັນຜົນປໂຍດແກ່ຣາຊອານາຈັກຂອງພຣະເຈົ້າເປັນໄປຕາມຄວາມຄິດຂອງເຮົາເອງ ຫລືເປັນແຜນການຂອງພຣະວິນຍານບໍຣິສຸດທີ່ເຮັດໃຫ້ພວກເຮົາມີຄວາມປະທັບໃຈ?
- ບາງເທື່ອພຣະເຈົ້າຊົງບອກພວກເຮົາໂດຍຕັດຜ່ານຄຳເວົ້າຂອງຄົນອື່ນ, ພວກເຮົາບໍ່ຄວນເອົາຕາມຄວາມຄິດເຫັນຂອງມະນຸດເໜືອການຊົງນຳຂອງພຣະເຈົ້າ. ພຣະຄຳຂອງພຣະອົງ ແລະພຣະວິນຍານຂອງພຣະອົງມີພລັງອຳນາດໃນການນຳພາພວກເຮົາ.

**ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ:** (2 ຊາມູເອນ 7:1-7)

1. ການທີ່ດາວິດເລົ່າແຜນການຂອງລາວໃຫ້ກັບນາທານຟັງນັ້ນຜິດບໍ່?
2. ວິທີທາງແນວໃດທີ່ພຣະເຈົ້າຊົງໃຊ້ນາທານໃຫ້ໄປນຳພາດາວິດ? ພຣະເຈົ້າໄດ້ເປີດເຜີຍພຣະປະສົງຂອງພຣະອົງໂດຍທາງໃດໃຫ້ແກ່ພວກເຮົາ?
3. ດາວິດໄດ້ມີຄວາມຮູ້ສຶກບໍ່ສະບາຍໃຈແນວໃດສຳລັບສິ່ງທີ່ຢູ່ອ້ອມຮອບລາວໃນເມື່ອປຽບທຽບໃສ່ກັບເຮືອນນາວາໃຫຍ່ຂອງໂນອາ?

2. **ນໍ້າພຣະທັຍຂອງພຣະເຈົ້າ:** (2 ຊາມູເອນ 7:11ຂ-16)

- ສເນີໃຫ້ນັກຮຽນຜູ້ນຶ່ງອ່ານພຣະທັມ 2 ຊາມູເອນ 7:11ຂ-16
- ຂີດກະດານເປັນສອງພາກສ່ວນ, ສ່ວນທີນຶ່ງຂຽນຊື່ "ດາວິດ" ໃສ່ ແລະພາກທີສອງຂຽນ "ພຣະເຈົ້າແມ່ນເຮືອນສຳລັບດາວິດ"
- ເຮືອນປະເພດໃດທີ່ດາວິດຢາກສ້າງສຳລັບພຣະເຈົ້າ? ຈຸດປະສົງ ແລະເຫດຜົນທີ່ມີ ໃຫ້ຂຽນຄຳຕອບໃສ່ກ້ອງຊື່ ດາວິດ.ການປຽບທຽບຂອງຝ່າຍໂລກ, ກ່ຽວກັບເຮືອນຊົ່ວຄາວທີ່ດາວິດຕ້ອງການສ້າງໃນເວລາທີ່ມີຊີວິດຢູ່, ຈຸດປະສົງ ແລະອິທິພົນຂອງພຣະເຈົ້າທີ່ຕ້ອງການໃຫ້ດາວິດ. ຂຽນຄຳຕອບເຫລົ່ານີ້

- ໃສ່ກ້ອງພາກທີສອງ.
- ມີທາງໃດທີ່ພວກເຮົາຈະແນ່ໃຈຕໍ່ການປັກໃຈໃສ່ແຜນການການອັນຕລອດເປັນນິດທີ່ພຣະເຈົ້າມີໄວ້ໃຫ້ພວກເຮົາ ແລະຄອບຄົວຂອງພວກເຮົາ ແທນແຜນການອັນມີເຂດຈຳກັດ (ຊົ່ວຄາວ) ຂອງພວກເຮົາເອງ?

**ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ:** 2 ຊາມູເອນ 7:11ຂ-16

1. ພຣະເຈົ້າໄດ້ຊົງສັນຍາຫຍັງກັບດາວິດກ່ຽວກັບເຊື້ອສາຍຂອງລາວ?
2. ຄຳສັນຍາແນວໃດທີ່ພຣະເຈົ້າໄດ້ຊົງໃຫ້ແກ່ທ່ານ ແລະຄອບຄົວຂອງທ່ານແລ້ວ?
3. ທ່ານຄິດວ່າດາວິດໄດ້ຮັບການສນັບສນູນໃນແຜນການຂອງລາວໃນການສ້າງພຣະວິຫານນັ້ນບໍ່?
4. ພວກເຮົາຈະມີຄວາມຕອບສນອງແນວໃດທີ່ພຣະເຈົ້າເວົ້າວ່າ “ບໍ່” ໃນເວລາພວກເຮົາທູນຂໍຄວາມສາມາດ
5. ຫລືຄວາມຊ່ອຍເຫລືອໃນການເຮັດສິ່ງໃດສິ່ງນຶ່ງ?

## 3 . **ການຖ່ອມຕົວແລະຍອມຕໍ່:** (2 ຊາມູເອນ 7:18-21)

- ໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ ພຣະທັມ 2 ຊາມູເອນ 7:18-21
- ທາງຝ່າຍເນື້ອໜັງທີ່ດາວິດຕ້ອງກະທຳຕໍ່ອົງພຣະຜູ້ເປັນເຈົ້າກ່ອນສິ່ງອື່ນໝົດ ແມ່ນການຖ່ອມຕົວແມ່ນບໍ່?
- ຝ່າຍເນື້ອໜັງຂອງພວກເຮົາ ເວລາພວກເຮົາຕ້ອງການໜ້າທີ່ການງານຢ່າງໃດຢ່າງນຶ່ງພວກເຮົາມັກຈະກະທຳກ່ອນທູນຂໍຄວາມຊ່ອຍເຫລືອຈາກພຣະເຈົ້າແມ່ນບໍ່?
- ໃຫ້ຜູ້ນຶ່ງເລົ່າເຣື່ອງໝາທີ່ມັກເອະອະໂວຍວາຍຢູ່ຕລອດ. ໃຫ້ລາວບອກຄວາມແປກປລາດ ແລະການຄຸກຄາມໜ້າຢ້ານຂອງສັດລ້ຽງຕົວນີ້. ຊຶ່ງຊີ້ໃຫ້ເຫັນວ່າໝາມັນບໍ່ໄດ້ມີເຈຕນາເຮັດໃຫ້ມີຄວາມເສັຽຫາຍ ແຕ່ເປັນພຽງບໍ່ໄດ້ມີຄວາມສຳນຶກເຖິງຜົນໄດ້ຜົນເສັຽ ແລະຄວາມໄວ້ວາງໃຈ.
- ໃຫ້ອີກຜູ້ນຶ່ງເລົ່າເຣື່ອງໝາທີ່ປະພຶດດີຕໍ່ເຈົ້າຂອງມັນ, ເປັນດ້ວຍເຫດໃດໝາສອງປະເພດນີ້ຈຶ່ງມີຄວາມແຕກຕ່າງກັນ. ແລ້ວມາສົນທະນາກັນໃຫ້ໄດ້ເຫດຜົນ ແລະໃຈຄວາມອັນສຳຄັນ.

**ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ:** 2 ຊາມູເອນ 7:18-21

1. ແມ່ນຫຍັງທີ່ດາວິດມີຊຶ່ງເປັນທີ່ສັຣເສີນຍ້ອງຍໍສຳລັບຊີວິດຂອງລາວ?
2. ແມ່ນອັນໃດທີ່ເປັນໜ້າສັຣເສີນນັບຖືທີ່ທ່ານມີໃນຊີວິດຂອງທ່ານ
3. ເປັນຫຍັງບາງເທື່ອພວກເຮົາຈຶ່ງມີຄວາມຂັດແຍ້ງກັບຊີວິດໃນການຍອມຖ່ອມຕົວຕໍ່ພຣະເຈົ້າຜູ້ທີ່ມີອຳນາດປົກຄອງຊີວິດຂອງມະນຸດ?

## **ພຣະຄັມພີແຫ່ງຄວາມຈິງ**

- ແຜນການທີ່ດີທີ່ໄດ້ວາງໄວ້ບໍ່ພຽງພໍທໍ່ການທຳໃຫ້ພໍພຣະທັຍຂອງອົງພຣະຜູ້ເປັນເຈົ້າ.
- ການຊອກສແວງຫາພຣະປະສົງຂອງອົງພຣະຜູ້ເປັນເຈົ້າ ເປັນການສຳຄັນທີ່ສຸດ
- ໃນເມື່ອມີຜູ້ໃດຜູ້ນຶ່ງມາໃຫ້ຄຳປຶກສາແກ່ພວກເຮົາ. ພວກເຮົາຄວນຈະໃຊ້ເວລາທູນຕໍ່ພຣະເຈົ້າກ່ອນພວກເຮົາຈຶ່ງຕອບ.